ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 23 ຫາ 27 ທັນວາ 2024



ລາວ-ກຳປູເຈຍ ລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານກະສິກຳ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ລາວ-ກຳປູເຈຍ ລົງນາມບົດບັນທຶກຄວາມເຂົ້າໃຈ (MoU) ວ່າດ້ວຍການຮ່ວມມືດ້ານກະສິກຳ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ທ່ານ ປອ ລິນຄຳ ດວງສະຫວັນ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍ ທ່ານ ປອ ບຸນເດດ ສຸດທະວິໄລ, ຫົວໜ້າກົມແຜນການ ແລະ ການຮ່ວມມື ໄດ້ຕິດຕາມຄະນະຜູ້ແທນຂັ້ນສູງ ນຳໂດຍ ພະນະ ທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄປຢ້ຽມຢາມ ຣາຊະອານາຈັກ ກຳປູເຈຍ ຢ່າງເປັນທາງການ ແຕ່ວັນທີ 4-5 ທັນວາ 2024 ຕາມຄຳເຊື້ອເຊີນຂອງ ສົມເດັດ ມະຫາ ບໍວໍ ທິບໍດີ ຮຸນມາແນດ ນາຍົກລັດຖະ ມົນຕີ ແຫ່ງ ຣາຊະອານາຈັກ ກຳປູເຈຍ.

ການຢ້ຽມຢາມໃນຄັ້ງນີ້ແມ່ນມີຄວາມສຳຄັນຫຼາຍ ເພື່ອສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສາມັກຄີອັນເປັນມູນເຊື້ອທີ່ມີມາແຕ່ດົນນານ ແລະ ການເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ລາວ ແລະ ກຳປູເຈຍ ໃຫ້ເລິກເຊິ່ງກວ່າເກົ່າ. ທັງສອງຝ່າຍໄດ້ ທົບທວນການຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງການ ຮ່ວມມືໃນຕໍ່ໜ້າ ໂດຍສະເພາະແມ່ນ ການສືບຕໍ່ຊຸກຍູ້ບັນດາຂະແໜງການທີ່ກ່ຽວຂ້ອງຂອງສອງປະເທດ ເພື່ອສົ່ງເສີມດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ກໍຄື ການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດຂອງສອງປະເທດ ລາວ-ກຳປູເຈຍ ໃຫ້ສາມາດແລກປ່ຽນບົດຮຽນ ແລະ ເຮັດທຸລະກິດຮ່ວມກັນໃຫ້ຫຼາຍຂຶ້ນ ເພື່ອເພີ່ມມູນຄ່າການຄ້າສອງຝ່າຍໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍໃຫ້ສຸມໃສ່ຂະຫຍາຍການຄ້າທີ່ມີທ່າແຮງ ເປັນຕົ້ນ ດ້ານພະລັງງານໄຟຟ້າ, ກະສິກຳ ແລະ ອື່ນໆ. ພາຍຫຼັງສຳເລັດການພົບປະສອງຝ່າຍ, ກໍ່ໄດ້ມີພິທີລົງນາມເອກະສານການຮ່ວມມື ລາວ-ກຳປູເຈຍ ຈຳນວນ 3 ສະບັບ ໂດຍການເປັນສັກຂີພິຍານຂອງຜູ້ນຳທັງສອງປະເທດ. ໃນນັ້ນ, ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືໃນຂະແໜງການກະສິກຳ ແມ່ນລົງນາມໂດຍ ທ່ານ ປອ ລິນຄຳ ດວງສະຫວັນ, ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ ແລະ



ທ່ານ Dith Tina, ລັດຖະມົນຕີກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ ແຫ່ງ ຣາຊະອານາຈັກກຳປູເຈຍ.

ການຮ່ວມມືດ້ານກະສິກຳນີ້ ປະກອບດ້ວຍຫຼາຍກິດຈະກຳ ເປັນຕົ້ນແມ່ນ ການແລກປ່ຽນບົດຮຽນ (ເຕັກນິກ ການຜະລິດ ແລະ ການວິໄຈ), ການຜະລິດແນວພັນພືດ, ການຮ່ວມມືດ້ານສຸຂານາໄມ ແລະ ສຸຂານາໄມພືດ, ການລ້ຽງສັດ-ສຸຂະພາບສັດ, ການລ້ຽງປາ-ການປະມົງນ້ຳຈືດ, ການອະນຸລັກສິ່ງແວດລ້ອມຂ້າມຊາຍແດນຮ່ວມກັນ ໂດຍສະເພາະການອະນຸລັກປາໂລມານ້ຳຈືດ ຫຼື ແມ່ນ້ຳ, ການສົ່ງເສີມ ແລະ ອຳນວຍຄວາມສະດວກທາງການຄ້າຜະລິດຕະພັນກະສິກຳ, ການເສີມສ້າງ ແລະ ສົ່ງເສີມມາດຕະຖານຄວາມປອດໄພອາຫານ ຜ່ານແນວທາງປະຕິບັດທາງການກະສິກຳທີ່ດີ ແລະ ມາດຕະຖານກະສິກຳອິນຊີ, ການວາງແຜນ-ບໍລິຫານຈັດການທີ່ດິນກະສິກຳ ແລະ ປ່າໄມ້, ການບໍລິຫານຈັດການປ່າໄມ້ແບບຍືນຍົງ ໂດຍສະເພາະການແບ່ງປັນຂໍ້ມູນ, ຕ້ານການຄ້າຂາຍສັດປ່າຜິດກົດໝາຍຂ້າມຊາຍແດນ, ການຄ້າໄມ້, ສົນທິສັນຍາ CITES, ແລະ ການເຂົ້າຮ່ວມໂຄງການຮ່ວມມືລະດັບພາກພື້ນ ແລະ ລະດັບໂລກ, ການຫຼຸດຜ່ອນການປ່ອຍມົນລະພິດຈາກການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ (REDD+), ການວິໄຈ-ພັດທະນາອຸດສາຫະກຳຢາງພາລາ, ການພັດທະນາຊັບພະຍາກອນມະນຸດ ແລະ ອື່ນໆ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດການຮ່ວມມືດັ່ງກ່າວນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ພ້ອມທັງເກີດຜົນ ປະໂຫຍດສູງສຸດແກ່ປະເທດຊາດ ແລະ ປະຊາຊົນ ຂອງ ທັງສອງປະເທດ, ທັງສອງຝ່າຍ ຈະໄດ້ແຕ່ງຕັ້ງຄະນະຮັບຜິດຊອບຈັດຕັ້ງປະຕິບັດວຽກງານຮ່ວມມືກັນຕໍ່ໜ້າ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;